Updated 5/4/2020
AAPIERN.ORG

# NCAPA COVID-19 Resource:

*ICE Check-Ins During COVID-19*
*ການເຂົ້າໄປລາຍງານຕົວນຳຫ້ອງການ ICE ໃນຊ່ວງພາວະພະຍາດໂຄວິດ-19 ລະບາດ*

## ຖ້າຂ້ອຍມີກຳນົດໃຫ້ລາຍງານຕົວນຳຫ້ອງການ ICE ຂ້ອຍຄວນເຮັດແນວໃດ?

- ທ່ານຄວນຕິດຕໍ່ຫ້ອງການປະຈຳທ້ອງຖິ່ນຂອງທ່ານ: **https://www.ice.gov/contact/ero**

## ຂ້ອຍຈຳເປັນຕ້ອງເຂົ້າໄປລາຍງານດ້ວຍຕົວເອງບໍ່?

- ທ່ານຍັງຕ້ອງໄດ້ລາຍງານຕົວ ແຕ່ບໍ່ຈຳເປັນໄປດ້ວຍຕົວເອງ. ຫ້ອງການ ICE ໄດ້ຍົກເລີກນັດລາຍງານຕົວທັງໃນຫ້ອງການ ແລະການໄປຢ້ຽມຢາມຕາມບ້ານຄົນ. ການລາຍງານຕົວນຳຫ້ອງການ ICE ຊ່ວງນີ້ຈະໃຊ້ວິທີໂທລະສັບ ຫຼືຜ່ານທາງອີເລັກໂທນິກ. ການປະຕິບັດນີ້ຈະຖືກນຳໃຊ້ຈົນກວ່າຄຳສັ່ງກັກບໍລິເວນຖືກຍົກເລີກ ແລະຫ້ອງການ ICE ແຈ້ງມາ ວ່າພາວະພະຍາດໂຄວິດ-19 ບໍ່ເປັນຄວາມສ່ຽງຕໍ່ການເຂົ້າລາຍງານຕົວໃນຫ້ອງການ.

## ຂ້ອຍຄວນເຮັດແນວໃດ ຖ້າຂ້ອຍຮູ້ວ່າຂ້ອຍຈະບໍ່ສາມາດລາຍງານຕົວນຳຫ້ອງການ ICE ຕາມກຳນົດ?

- ທ່ານຄວນຕິດຕໍ່ຫ້ອງການປະຈຳທ້ອງຖິ່ນ. ທ່ານຄວນຖິ້ມຂໍ້ຄວາມໄວ້ໂດຍລະບຸຊື່ຂອງທ່ານ, ເບີບັດຂຽວ, ແລະເບີໂທລະສັບ. ຫ້ອງການ ICE ຈະຕິດຕໍ່ກັບມາຫາທ່ານ ພ້ອມທັງຄຳສັ່ງວ່າທ່ານຕ້ອງເຮັດແນວໃດຕໍ່ໄປ.

## ຖ້າຫ້ອງການ ICE ບໍ່ຮັບໂທລະສັບຂ້ອຍເດ້?

- ທ່ານຄວນພະຍາຍາມຕິດຕໍ່ຫ້ອງການປະຈຳທ້ອງຖິ່ນໄປຕະຫຼອດ. ທ່ານຄວນຖິ້ມຂໍ້ຄວາມໄວ້ໂດຍລະບຸຊື່ຂອງທ່ານ, ເບີບັດຂຽວ, ແລະເບີໂທລະສັບ.  ຫ້ອງການ ICE ຈະຕິດຕໍ່ກັບມາຫາທ່ານ ພ້ອມທັງຄຳສັ່ງວ່າທ່ານຕ້ອງເຮັດແນວໃດຕໍ່ໄປ.

## ຖ້າຂ້ອຍເປັນບຸກຄົນທີ່ຢູ່ໃນໂປຣແກມລາຍງານຕົວຢ່າງເຂັ້ມງວດ (ISAP) ແລະມີກຳນົດລາຍງານຕົວນຳຫ້ອງການ ICE ຂ້ອຍຄວນເຮັດແນວໃດ?

- ຖ້າທ່ານເປັນບຸກຄົນທີ່ຢູ່ໃນໂປຣແກມລາຍງານຕົວຢ່າງເຂັ້ມງວດ (ISAP) ທ່ານບໍ່ຈຳເປັນເຂົ້າໄປລາຍງານຕົວ ບໍ່ວ່າຈະເປັນໃນຫ້ອງການ ICE ຫຼືການຢ້ຽມຢາມໃນບ້ານ ການລາຍງານຕົວນຳໂຄງການ ISAP ແມ່ນຜ່ານທາງໂທລະສັບ.

## ຖ້າຂ້ອຍເປັນບຸກຄົນທີ່ຢູ່ໃນໂປຣແກມລາຍງານຕົວຢ່າງເຂັ້ມງວດ (ISAP) ແລະບໍ່ສາມາດເຂົ້າໄປລາຍງານຕົວນຳຫ້ອງການ ICE ຕາມມື້ນັດ ຂ້ອຍຄວນເຮັດແນວໃດ?

- ຖ້າທ່ານເປັນບຸກຄົນທີ່ຢູ່ໃນໂປຣແກມລາຍງານຕົວຢ່າງເຂັ້ມງວດ (ISAP) ແລະບໍ່ສາມາດໄປຕາມນັດ ທ່ານຈຳເປັນຕ້ອງຕິດຕໍ່ໄປຫາເຈົ້າໜ້າທີ່ປົກຄອງປະຈຳຂອງທ່ານ ແລະໃຫ້ເກັບຫຼັກຖານທີ່ລະບຸວັນທີແລະເວລາທີ່ທ່ານໂທຕິດຕໍ່ເຈົ້າໜ້າທີ່ປະຈຳຕົວຂອງທ່ານ. ຖ້າເຈົ້າໜ້າທີ່ປົກຄອງປະຈຳຂອງທ່ານບໍ່ຮັບໂທລະສັບ, ກະລຸນາຖິ້ມຂໍ້ຄວາມໄວ້ພ້ອມລະບຸຊື່ຂອງທ່ານ, ເບີບັດຂຽວ, ແລະເບີໂທລະສັບ.

NCAPA National Council of Asian Pacific Americans | COVID-19 TASKFORCE | Laotian American National Alliance

Additional Resources:
- ICE - FAQs on Immigration Enforcement and Check-Ins: **https://www.ice.gov/coronavirus**
- ICE - Contact Information for Field Offices: **https://www.ice.gov/contact/ero**
- NYC Mayor's Office of Immigrant Affairs - Resources for Immigrants During COVID-19: Status of Immigration Proceedings and Enforcement: **https://www1.nyc.gov/site/immigrants/help/city-services/resources-for-immigrant-communities-during-covid-19-pandemic.page**